(ສະບັບແປບໍ່ເປັນທາງການ)

# ແຜນດຳເນີນງານຖະແຫຼງການວຽງຈັນ
# ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ

# (VDCAP II 2016-2025)

ກະກຽມໂດຍ

ກົມຮ່ວມມືສາກົນ, ກະຊວງແຜນການ ແລະການລົງທຶນ

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| **I.** ຄວາມເປັນເຈົ້າການ ແລະ<br>**II.** ຄວາມສອດຄ່ອງ | 1. ທຶນເພື່ອການພັດທະນາຕ້ອງໄດ້ຮັບການປັບປຸງ ແລະມີຄວາມສອດຄ່ອງຫຼາຍຂຶ້ນຕໍ່ກັບວາລະ ແລະເນື້ອໃນຂອງແຜນພັດທະນາແຫ່ງຊາດໂດຍຜ່ານການປະຕິບັດການວາງແຜນທີ່ເລັ່ງໃສ່ຜົນໄດ້ຮັບເປັນຫຼັກ | (a) ຂະຫຍາຍຂອບເຂດຄວາມສອດຄ່ອງ ແລະການນຳໃຊ້ກອບວຽກທີ່ແນ່ໃສ່ຜົນໄດ້ຮັບແຫ່ງຊາດ ໂດຍການປະສານສົມທົບກັບບັນດາຄູ່ຮ່ວມເພື່ອການພັດທະນາໃຫ້ບັນດາຜູ້ສະໜັບສະໜູນການຮ່ວມມື ເພື່ອການພັດທະນາ. | ການປະຕິບັດແຜນພັດທະນາເສດຖະກິດສັງຄົມຄັ້ງທີ່ 8 ທີ່ເລັ່ງໃສ່ຜົນໄດ້ຮັບເປັນຫຼັກ ແມ່ນໄດ້ນຳໃຊ້ໂດຍກະຊວງແຜນການ ແລະການລົງທຶນ<br><br>• ເປົ້າໝາຍມີຄວາມສອດຄອງໃນອັດຕາສ່ວນ 95%<br>• ຜົນໄດ້ຮັບມີຄວາມສອດຄ່ອງໃນອັດຕາສ່ວນ 63%<br>• ການນຳໃຊ້ລະບົບການຕິດຕາມ ແລະປະເມີນຜົນແຫ່ງຊາດໃນອັດຕາສ່ວນ 56%<br>ການປະເມີນທຶນສົມທົບຂອງລັດຖະບານໃນການຂຶ້ນແຜນຂັ້ນສຸດທ້າຍໃນອັດຕາສວ່ນ 60% | ໃນປີ 2020 ຕ້ອງບັນລຸໄດ້ການປະເມີນຜົນແບບແຜນການຈັດຕັ້ງປະຕິບັດການວາງແຜນທີ່ເລັ່ງໃສ່ຜົນໄດ້ຮັບເປັນຫຼັກໂດຍຜ່ານການທົບທວນການປັບປຸງ ແຜນພັດທະນາເສດຖະກິດສັງຄົມຄັ້ງທີ່ 8<br><br>ໃນປີ 2025 ການປະຕິບັດການວາງແຜນທີ່ເລັ່ງໃສ່ຜົນໄດ້ຮັບ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ຢ່າງທົ່ວເຖິງ ໂດຍກະຊວງ ຂະແໜງການ ແລະທ້ອງຖິ່ນ, ໄປເຖິງຂັ້ນບ້ານ ລວມເຖິງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ<br><br>ໃນ ປີ 2025 ຕ້ອງບັນລຸສີ່ເປົ້າໝາຍຂອບວຽກໃຫ້ໄດ້ 100%<br><br>ໝາຍເຫດ:<br>ເປົ້າໝາຍ ສາກົນ-ການປະສານສົມທົບຂອງບັນດາຄູ່ຮ່ວມເພື່ອການພັດທະນາ | ແຜນດຳເນີນງານຖະແຫຼງການວຽງຈັນ ແລະບົດລາຍງານການສຳຫຼວດ ຂອງການຮ່ວມມືເພື່ອການພັດທະນາສາກົນ | ກົມຮ່ວມມືສາກົນ , ກະຊວງແຜນການ ແລະການລົງທຶນ,ກະຊວງຂະແໜງການ ແລະທ້ອງຖິ່ນ, ໂດຍຜ່ານການປຶກສາຫາລືກັບ ອົງການສະຫະປະຊາຊາດເພື່ອການພັດທະນາ, ຫ້ອງການສະຫະປະຊາຊາດປະຈຳລາວ, 10 ໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ (Sector working groups) ແລະບັນດາຄູ່ຮ່ວມພັດທະນາອື່ນໆທີ່ກ່ຽວຂ້ອງ |

(ສະບັບແປບໍ່ເປັນທາງການ)

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| | | | | ທັງໝົດແມ່ນອີງໃສ່ຂອບເຂດວຽກງານທີ່ເລັ່ງໃສ່ຜົນໄດ້ຮັບພາຍໃນປະເທດເປັນຫຼັກ | | |
| | 2. ເພີ່ມທະວີຄວາມສອດຄ່ອງລະຫວ່າງ ຂະບວນການຂຶ້ນແຜນງົບປະມານ ແຫ່ງຊາດ ໃຫ້ມີຄວາມແໜ້ນແຟ້ນຂຶ້ນ | (b) ການຈັດຕັ້ງປະຕິບັດ ການສ້າງຂອບລາຍຈ່າຍໄລຍະກາງ (MTEF) ຢ່າງມີປະສິດທິຜົນ ເພື່ອໃຫ້ສາມາດບັນລຸ ແຜນພັດທະນາເສດຖະກິດສັງຄົມ ຄັ້ງທີ່ 8 ລວມໄປເຖິງ ການພັດທະນາແບບຍືນຍົງ | ກຳລັງພັດທະນາການສ້າງຂອບລາຍຈ່າຍໄລຍະກາງ (MTEF) | ສຳເລັດການສ້າງຂອບລາຍຈ່າຍໄລຍະກາງ (MTEF) ໃນປີ 2018<br><br>ນຳໃຊ້ ການສ້າງຂອບລາຍຈ່າຍໄລຍະກາງ (MTEF) ໃນປີ 2019-2020<br><br>ທົບທວນຄືນ ແລະປັບປຸງການສ້າງຂອບລາຍຈ່າຍໄລຍະກາງ (MTEF) ໃນປີ 2020 | ບົດລາຍງານຂອງກະຊວງການເງິນກ່ຽວກັບການຄຸ້ມຄອງງົບປະມານ | ກະຊວງການເງິນ ໂດຍຜ່ານການປຶກສາຫາລືກັບທະນາຄານໂລກ, ທະນາຄານພັດທະນາອາຊີ ແລະໜ່ວຍງານຂະແໜງການມະຫາພາກ ແລະ ບັນດາຄູ່ຮ່ວມພັດທະນາອື່ນໆທີ່ກ່ຽວຂ້ອງ |
| | 3. ທຶນ ຊກພ ແລະທຶນ ທາງການອື່ນໆແມ່ນຈະຕ້ອງຜ່ານ ລະບົບງົບມານ ແລະຄວນຮອງຮັບ ໂດຍສະພາແຫ່ງຊາດ | ອັດຕາສ່ວນຂອງທຶນ ຊກພ ແລະແຫຼ່ງທຶນທາງການອື່ນໆ ແມ່ນຈະໄດ້ຈັດໃນ ແຜນງົບປະມານປະຈຳປີ ແລະຕ້ອງໄດ້ຮັບການອະນຸມັດ ແລະຮອງຮັບເອົາໂດຍສະພາແຫ່ງຊາດ ແລະສະພາທ້ອງຖິ່ນ | ທຶນ ຊກພ ຈົດຜ່ານລະບົບງົບປະມານ 19% | ແມ່ນບໍ່ໃຫ້ຕ່ຳກວ່າ 59.5%ໃນປີ 2025(ອັດຕາສ່ວນຮ້ອຍການເພີ່ມຂຶ້ນປີຕໍ່ປີໃຫ້ໄດ້ 4.05%)<br>ໝາຍເຫດ:<br>ເປົ້າໝາຍລະດັບສາກົນ-ຕ້ອງ | ບົດລາຍງານຂອງກະຊວງ ການເງິນ ກ່ຽວກັບໂຄງການການຄຸ້ມຄອງການເງິນແຫ່ງລັດ | ກະຊວງ ການເງິນ ແລະ ກົມຮ່ວມມືສາກົນ/ກະຊວງແຜນການ ແລະ ການລົງທຶນ ໂດຍຜ່ານການປຶກສາ |

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| | | | | ບັນລຸຊ່ອງວ່າງໃຫ້ໄດ້ເຄິ່ງໜຶ່ງ ຊ່ອງຫວ່າງຂອງປະທເທດລາວ ເຮົາແມ່ນ 81% ດັ່ງນັ້ນເປົ້າໝາຍສຳລັບລາວແມ່ນເທົ່າກັບ 19%+82%ຫານ2ເທົ່າກັບ 59.5% | ບົດລາຍງານຂອງກະຊວງແຜການ ແລະການລົງທຶນ ກ່ຽວກັບ ການຈັດຕັ້ງ ປະຕິບັດບັດ ແຜນພັດທະນາ ເສດຖະກິດສັງຄົມຄັ້ງທີ່ 8 ຕໍ່ສະພາແຫ່ງຊາດ<br><br>ບົດລາຍງານຂອງກະຊວງ ການຕ່າງປະເທດຕໍ່ ກັບອົງການຈັດຕັ້ງສາກົນທີ່ບໍ່ສັງກັດ ລັດຖະບານ ແລະການສະໜັບສະໜູນ ການພັດທະນາ ສະມາຄົມບໍ່ຫວັງຜົນກຳໄລ | ຫາລືກັບກະຊວງ ຂະແໜງການ, ທະນາຄານໂລກ, ທະນາຄານພັດທະນາອາຊີ, ໜ່ວຍງານຂະແໜງການ ມະຫາພາກ ແລະ ບັນດາຄູ່ຮ່ວມ ພັດທະນາອື່ນໆທີ່ ກ່ຽວຂ້ອງ |

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| | 4. ສ້າງຄວາມເຂັ້ມແຂງ ໃຫ້ແກ່ລະບົບແຫ່ງຊາດ ເພື່ອໃຫ້ບັນດາຄູ່ຮ່ວມພັດທະນາ ເຂົ້ານຳໃຊ້ໃຫ້ຫຼາຍທີ່ສຸດ: ການຄຸ້ມຄອງບໍລິຫານງົບປະມານ, ການລາຍງານການເງິນ ແລະ ການກວດສອບ ແລະ ການຈັດຊື້-ຈັດຈ້າງ | ອັດຕາສ່ວນຂອງການນຳໃຊ້ລະບົບແຫ່ງຊາດ ການຄຸ້ມຄອງການເງິນແຫ່ງລັດ ແລະການສ້າງລະບົບການຈັດຊື້-ຈັດຈ້າງ ຂອງບັນຄູ່ຮວມພັດທະນາ ເຊິ່ງລະບົບແຫ່ງຊາດດັ່ງກ່າວ ຕ້ອງໄດ້ຮັບການປະເມີນຜົນ ຢ່າງເປັນປົກກະຕິ | 22% ຂອງທຶນທັງໝົດ<br>27% ຂອງງົບປະມານ<br>22% ທາງດ້ານການເງິນ<br>19% ຂອງການກວດສອບ<br>21% ຂອງການຈັດຊື້ | ບໍ່ໃຫ້ຕໍ່າກວ່າ 48%<br><br>ໝາຍເຫດ:<br>ເປົ້າໝາຍລະດັບສາກົນ-ຫຼຸດຊ່ອງຫວ່າງໃຫ້ໄດ້ 1/3 ຂອງລະດັບຄະແນນທີ່ ການປະເມີນດ້ານນະໂຍບາຍ ແລະ ສະຖາບັນການປົກຄອງຂອງປະເທດ (CPIA) ໄດ້ກຳນົດໄວ້ຄື 3.5 ແລະ 4.5 | ບົດລາຍງານຂອງກະຊວງ ການເງິນ ກ່ຽວກັບການຄຸ້ມຄອງການເງິນແຫ່ງລັດ<br><br>ການສຳຫຼວດໃນລະດັບສາກົນຕໍ່ກັບການເປັນຄູ່ຮ່ວມມືກັບບັນດາຄູ່ຮ່ວມພັດທະນາທີ່ມີປະສິດທິຜົນ | ກະຊວງການເງິນ ໂດຍຜ່ານການປຶກສາຫາລືກັບບັນດາກະຊວງຂະແໜງການປະກອບດ້ວຍ10 ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຜູ້ໃຫ້ທຶນ, ທະນາຄານໂລກ, ທະນາຄານພັດທະນາອາຊີ ແລະບັນດາຄູ່ຮ່ວມພັດທະນາອື່ນໆທີ່ກ່ຽວຂ້ອງ |
| **III.** ຄວາມກົມກຽວ ແລະ ງ່າຍດາຍ | 5. ການນຳໃຊ້ຫຼັກການຈັດຕັ້ງປະຕິບັດໂຄງການ ທີ່ເປັນແຜນງານ (PBAs) ແລະ ຮູບແບບການຈັດຕັ້ງປະຕິບັດ ຂອງຂະແໜງການທີ່ເປັນ (SWAp) ໃນການສະໜັບສະໜູນໃຫ້ແກ່ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງ | ການນຳໃຊ້ PBAs ແລະ SWAp ໃນຂະແໜງການຫຼັກ ໃນແຜນດຳເນີນງານ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ລວມເຖິງ ເປົ້າໝາຍການພັດທະນາແບບຍືນຍົງ ເຊັ່ນ: ຂະແໜງ ສຶກສາ, ສາທາ, ກະສິກຳ, ເກັບກູ້ລະເບີດບໍ່ທັນແຕກ ແລະຂະແໜງການ ອື່ນໆ ໃຫ້ຫຼາຍຂຶ້ນ ຕາມຄວາມເໝາະສົມ | ການລົງທະບຽນ ໃນການຂໍອະນຸມັດ ແຜນງານ/ຂະແໜງການ ຍັງບໍ່ມີການນຳໃຊ້ຢ່າງເຕັມສ່ວນ. | ລະບຽບການ ການຂໍອະນຸມັດ PBAs ແລະ SWAp ຈະຖືກຮັບຮອງເອົາ ໃນປີ2018<br><br>ປີ 2019, ຕ້ອງໄດ້ດຳເນີນ<br>ປີ 2022, ຕ້ອງໄດ້ດຳເນີນ<br>ປີ 2025, ຕ້ອງໄດ້ດຳເນີນ | ບົດລາຍງານແຜນດຳເນີນງານຖະແຫຼງການວຽງຈັນ ແລະ ບົດລາຍງານການສຳຫຼວດ ໃນລະດັບ ສາກົນ | ກົມຮ່ວມມືສາກົນ/ກະຊວງ ຜທ ປຶກສາຫາລືກັບກະຊວງ ຂະແໜງການ ລວມເຖິງ 10 ໜ່ວຍງານຂະແໜງການ, ອົງການ ສປຊ ເພື່ອການພັດທະນາ, |

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| | ຊາດ ລວມເຖິງ ເປົ້າໝາຍ ການພັດທະນາ ແບບຍືນຍົງ. | | | | | ຫ້ອງການ ສປຊ ປະຈຳລາວ ແລະ ຄູ່ຮ່ວມພັດທະນາອື່ນໆ |
| | 6. ຄູ່ຮ່ວມ ໃນການຮ່ວມມື ເພື່ອການພັດທະນາ ຈະ ປະສານສົມທົບກັນ ກ່ຽວກັບ ການສ້າງແຜນ ຍຸດທະນາສາດ, ກິດຈະກໍາ ແລະ ການປັບປຸງ ຂັ້ນຕອນ ໃຫ້ມີຄວາມ ສະດວກ ງ່າຍດາຍ ເພື່ອ ເພີ່ມທະວີ ການມີສ່ວນຮ່ວມ ກັບລັດຖະບານ ໃຫ້ ຫຼາຍຂຶ້ນ ແລະຫຼຸດຜ່ອນ ການຊໍ້າຊ້ອນກັນ. | ຄູ່ຮ່ວມ ໃນການຮ່ວມມື ເພື່ອການ ພັດທະນາ ຈະຮ່ວມຈັດຕັ້ງ ປະຕິບັດແຜນງານ ຮ່ວມກັນ. | ມີການຮ່ວມບາງກິດຈະກໍາ ໃນການດໍາເນີນງານ ການຈັດຕັ້ງປະຕິບັດ ກິດຈະກໍາ ເຊັ່ນ: ກຸ່ມ ສະມາຊິກ ສະຫະພາບ ເອີຣົບ, ອົງການ ສປຊ | ທາງເລືອກ 1 – ການນໍາໃຊ້ ແຜນງານ ຮ່ວມກັນ ພາຍໃຕ້ ຂອບ PBAs/SWAp ໃຫ້ ຫຼາຍຂຶ້ນ | ບົດລາຍງານ ແຜນດໍາເນີນງານ ຖະແຫຼງການ ວຽງຈັນ ແລະ ບົດລາຍງານການ ສໍາຫຼວດ ສາກົນ | ກົມຮ່ວມມື ສາກົນ/ກະຊວງ ຜທ ປຶກສາຫາລືກັບ ອົງການ ສປຊ ເພື່ອການ ພັດທະນາ, ຫ້ອງການ ສປຊ ປະຈໍາລາວ, ສະຫະພາບເອີຣົບ, 10 ໜ່ວຍງານ ຂະແໜງການ ແລະ ຄູ່ຮ່ວມ ພັດທະນາທີ່ ກ່ຽວຂ້ອງ |

| **ຫຼັກການ** | **ໜ້າວຽກທີ່ຕ້ອງປະຕິບັດ** | **ຕົວຊີ້ວັດຕົ້ນຕໍ** | **ຂໍ້ມູນພື້ນຖານ & ຄາດໝາຍ** | | **ແຫຼ່ງຂໍ້ມູນ** | **ພາກສ່ວນຮັບຜິດຊອບ** |
|---|---|---|---|---|---|---|
| | | | **2015 ຂໍ້ມູນພື້ນຖານ** | **2025 ຄາດໝາຍ** | | |
| **IV.** ເປີດກ້ວາງການເປັນຄູ່ຮ່ວມເພື່ອ ໝາກຜົນຂອງການພັດທະນາ | 7. ເພີ່ມທະວີຄວາມອາດສາມາດຂອງສະພາ ແຫ່ງຊາດ ແລະສະພາປະຊາຊົນແຂວງ, ໃນການອະນຸມັດ ແລະຕິດຕາມ ການຈັດຕັ້ງປະຕິບັດແຜນ ແລະ ງົບປະມານ ແຫ່ງລັດ ເພື່ອເພີ່ມທະວີ ຜົນສໍາເລັດຂອງການພັດທະນາ | ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ມີສິດ ແລະ ຫນ້າທີ່ລົງຕິດຕາມ ກວດການະໂຍບາຍ / ແຜນຍຸດທະສາດການພັດທະນາ ລະບຽບການ ແລະ ງົບປະມານ ຢູ່ໃນລະດັບສູນກາງ ແລະ ທ້ອງຖິ່ນ ເປັນແຕ່ລະໄລຍະ | ແຜນພັດທະນາ ຄວາມອາດສາມາດ ສໍາລັບ ສະພາແຫ່ງຊາດ ແລະສະພາປະຊາຊົນແຂວງ ກໍາລັງໄດ້ຮັບການປັບປຸງ | ປີ 2018, ສໍາເລັດແຜນສຸດທ້າຍ ຂອງ ແຜນການພັດທະນາຄວາມອາດສາມາດ<br><br>ປີ 2019 - 2021, ດໍາເນີນແຜນການພັດທະນາຄວາມອາດສາມາດ<br><br>ປີ 2022, ປະເມີນຜົນ ການພັດທະນາ ຄວາມສາມາດ ຂອງສະພາ ແຫ່ງຊາດ ແລະ ສະພາປະຊາຊົນ ແຂວງ | ບົດລາຍງານປະຈໍາປີ ຂອງສະພາ ແຫ່ງຊາດ ແລະສະພາປະຊາຊົນແຂວງ | ສະພາ ແຫ່ງຊາດ ແລະສະພາປະຊາຊົນ ແຂວງ ປຶກສາຫາລື ກັບ ກະຊວງ ຜທ, ການເງິນ, ລັດຖະບານ, ໜ່ວຍງານຂະແໜງການ ແລະ ຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງ. |
| | 8. ຜັນຂະຫຍາຍຈາກຂະບວນການໂຕະມົນ ກ້າວໄປສູ່ ການເປັນຄູ່ຮ່ວມ ເພື່ອການພັດທະນາທີ່ມີປະສິດທິຜົນ | ເລັ່ງໃສການເປັນຄູ່ຮ່ວມ ເພື່ອການພັດທະນາ ທີ່ມີປະສິດທິຜົນ ກັບຜົນຂອງຕົວຊີ້ວັດ ຢ່າງຈະແຈ້ງ | ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ຕ່າງໆໃນຂະບວນການໂຕະມົນໄດ້ສຸມໃສ່ການພັດທະນາຢ່າງກວ້າງຂວາງ | ເລີ່ມ 2017-2020, ຫັນປ່ຽນໄປສູ່ການຂະບວນ ການເປັນຄູ່ຮ່ວມ ເພື່ອການພັດທະນາ ທີ່ມີປະສິດທິຜົນ<br>ຈາກ 2021-2025, ເພີ່ມທະວີ ການມີສ່ວນຮ່ວມ ຂອງພາກສ່ວນກ່ຽວຂ້ອງ ຕ່າງໆ ໃນການຫັນປ່ຽນ ໄປສູ່ຂະບວນການ ເປັນຄູ່ຮ່ວມ ເພື່ອການພັດທະນາ ທີ່ມີປະສິດທິຜົນສຸມໃສ່ບັນຫາສະເພາະ ທີ່ຕິດ | ບົດທົດທວນການປະເມີນຂະບວນການໂຕະມົນ<br>ບົດລາຍງານຜົນກອງປະຊຸມຂະບວນການໂຕະມົນ ແລະ ບົດລາຍງານກອງປະຊຸມ | ກົມຮ່ວມມືສາກົນ/ກະຊວງ ຜທ ປຶກສາຫາລືກັບ ອົງການ ສປຊ ເພື່ອການພັດທະນາ, ອົງການ ສປຊ ເພື່ອການພັດຊັບພະຍາກອນ, 10 ໜ່ວຍງານຂະແໜງການ |

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| | | | | ພັນກັບການພັດທະນາ | ການຈັດຕັ້ງ ປະຕິບັດ ຂະບວນການ ໂຕະມົນ | ແລະບັນດາຄູ່ ຮ່ວມພັດທະນາ ທີ່ກ່ຽວຂ້ອງ |
| | 9. ເພີ່ມທະວີການຮ່ວມມື ກັບອົງການຈັດຕັ້ງທາງ ສັງຄົມ ແລະເຄືອຂ່າຍ ອົງ ການຈັດຕັ້ງສາກົນ ທີ່ບໍ່ ສັງກັດ ລັດຖະບານການ ປະສານງານ ແລະການວາງ ແຜນຮ່ວມກັນ ລວມເຖິງ ການຈັດຕັ້ງປະຕິບັດ ແລະ ການລາຍງານຜົນໄດ້ຮັບ ຈາກການຈັດຕັ້ງປະຕິບັດ ໂດຍຍຶດຖື ຕາມລະບຽບ ກົດໝາຍ ແລະ ກອບໜ້າ ວຽກ | (a) ປັບປຸງບັນດາກົດໝາຍ ແລະລະບຽບ ຫຼັກການ ໃນ ການດຳເນີນງານ ຂອງອົງ ການຈັດຕັ້ງທາງສັງຄົມ ແລະ ເຄືອຂ່າຍ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ໃນການ ປະຕິຮູບ,ການປຶກສາຫາລື ແລະການຈັດຕັ້ງປະຕິບັດ ໃນ ການວາງແຜນ ແລະການວາງ ນະໂຍບາຍ ການພັດທະນາ ແຫ່ງຊາດ.<br>(b) ຜັນຂະຫຍາຍຫຼັກການ ໃນ ການຈັດຕັ້ງປະຕິບັດ ເພື່ອການ ພັດທະນາທີ່ມີປະສິດທິຜົນເຂົ້າ ໃນວຽກວານຂອງ ອົງ ການຈັດຕັ້ງທາງສັງຄົມ ແລະ ເຄືອຂ່າຍອົງການຈັດຕັ້ງ ສາກົນ. | ມີກົດຫມາຍ ແລະລະບຽບ ການ ຄຸ້ມຄອງ, ການພົວພັນ /ການມີສ່ວນ ຮ່ວມ ຍັງບໍ່ໄປຕາມລະບຽບ ການ<br><br>ລະບຽບ ຫຼັກການ ຍັງບໍ່ທັນ ສອດຄ່ອງ ຕາມຄວາມ ຮຽກຮ້ອງຕ້ອງການ ໃນ ການຈັດຕັ້ງປະຕິບັດວຽກ ງານ ຂອງອົງການຈັດຕັ້ງ ທາງສັງຄົມ ແລະເຄືອຂ່າຍ ອົງການຈັດຕັ້ງສາກົນ ທີ່ບໍ່ ສັງກັດ ລັດຖະບານ | ເພີ່ມໄລຍະເວລາ,ປັບປຸງແລະ ນຳໃຊ້ ລະບຽບການ ແລະກົດ ໝາຍ ຂອງອົງການຈັດຕັ້ງທາງ ສັງຄົມ ແລະ ເຄືອຂ່າຍອົງ ການຈັດຕັ້ງສາກົນ ທີ່ບໍ່ສັງກັດ ລັດຖະບານ ເພື່ອເຮັດໃຫ້ການ ດຳເນີນງານ ມີປະສິດທິພາບ ແລະມີຄວາມຫຼາກຫຼາຍ.<br><br>ເປີດກວ້າງ ການມີສ່ວນຮ່ວມ ໃນການພັດທະນາ ລະບົບຖານ ຂໍ້ມູນຂອງ ຂອງອົງການຈັດຕັ້ງ ທາງສັງຄົມ ແລະເຄືອຂ່າຍອົງ ການຈັດຕັ້ງ ສາກົນ ເພື່ອອອກ ສູ່ ສາທາລະນະ ໄດ້ຊົມໃຊ້<br><br>ເຄື່ອງມື, ລະບົບ ທີ່ມີ ປະສິດທິພາບ ຈະນຳໃຊ້ ໃນປີ 2018<br><br>ປີ ***2020,*** ອົງການຈັດຕັ້ງທາງ | ບົດລາຍງານ ຂອງກະຊວງ ການຕ່າງປະເທດ ແລະ ກະຊວງ ພາຍໃນ<br><br>ບົດລາຍແຜນ ດຳເນີນງານ ຖະແຫຼງການ ວຽງຈັນ ແລະ ບົດລາຍງານ ການສຳຫຼວດ ເພື່ອການ ພັດທະນາສາກົນ | ກະຊວງ ການ ຕ່າງປະເທດ, ກະຊວງ ພາຍໃນ ປຶກສາຫາລື ກັບ ກະຊວງ ຖະແຫຼງການ, ໜ່ວຍງານຂະແໜ ງການ, ເຄືອຂ່າຍ ອົງການຈັດຕັ້ງ ສາກົນ ທີ່ບໍ່ສັງກັດ ລັດຖະບານ, ອົງ ການຈັດຕັ້ງ ທາງ ສັງຄົມ ແລະຄູ່ ຮ່ວມພັດທະນາ ອື່ນໆ |

(ສະບັບແປບໍ່ເປັນທາງການ)

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| | | | | ສັງຄົມ ແລະເຄືອຂ່າຍອົງການຈັດຕັ້ງ ສາກົນ ຈະໄດ້ຈັດຕັ້ງປະຕິບັດ ຕາມຫຼັກການພື້ນຖານ ການພັດທະນາ ທີ່ມີປະສິດທິຜົນ | | |
| **V.** ຄວາມໂປ່ງໃສ, ສາມາດຄາດຄະເນໄດ້ ແລະ ຮັບຜິດຊອບຮ່ວມກັນ | 10. ງົບປະມານແຫ່ງຊາດທີ່ສາມາດຄາດຄະເນ ແລະມີຄວາມຊັດເຈນຖືກຕ້ອງໄດ້ຖືກນໍາມາໃຊ້ເປັນເຄື່ອງມືຕົ້ນຕໍສໍາລັບການຮ່ວມມື ແລະການພົວພັນທີ່ມີປະສິດທິຜົນ | ບົດລາຍງານປະຈໍາປີ ກ່ຽວກັບແຜນ ແລະການນໍາໃຊ້ງົບປະມານທີ່ຊັດເຈນຖືກຕ້ອງໄດ້ຮັບການຈັດພິມເຜີຍແຜ່ເປັນລະບົບ ຊຶ່ງລວມທັງ ຊ.ກ.ພ ແລະທີ່ຜ່ານລະບົບງົບປະມານ | ໃຫ້ມີລະບົບການລາຍງານໃນລະດັບໃດໜຶ່ງ ແລະ ຕ້ອງໄດ້ປັບປຸງຕື່ມອີກ | ພາຍໃນປີ 2019, ບົດລາຍງານກ່ຽວກັບງົບປະມານແຫ່ງຊາດ ຈະມີການແຈກຢາຍ ແລະເຜີຍແຜ່ຢ່າງເປັນລະບົບ | ບົດລາຍງານຂອງກະຊວງການເງິນກ່ຽວກັບການຄຸ້ມຄອງງົບປະມານ | ກະຊວງ ການເງິນ ສົມທົບກັບ ກະຊວງຂະແໜງການ, ທະນາຄາພັດທະນາອາຊີ, ທະນາຄານໂລກ, ໜ່ວຍງານເສດຖະກິດມະຫາພາກ ແລະ ຄູ່ຮ່ວມພັດທະນາອື່ນໆທີ່ກ່ຽວຂ້ອງ |

(ສະບັບແປບໍ່ເປັນທາງການ)

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| | 11. ການອໍານວຍຄວາມ ສະດວກ ແລະການເຂົ້າ ເຖິງ ຂໍ້ມູນ ກ່ຽວກັບການ ຮ່ວມມື ເພື່ອການ ພັດທະນາ ແລະ ແຫຼ່ງທຶນ ເພື່ອການພັດທະນາອື່ນໆ (ຄໍາໝັ້ນສັນຍາ, ການ ເບີກຈ່າຍຕົວຈິງ ແລະຜົນ ໄດ້ຮັບ) | ມີລະບົບ ອອນໄລ ບົດລາຍງານ ກ່ຽວກັບ ການຮ່ວມມື ເພື່ອການ ພັດທະນາແລະ ແຫຼ່ງທຶນ ເພື່ອ ການພັດທະນາອື່ນໆ (ຄໍາໝັ້ນ ສັນຍາ, ການເບີກຈ່າຍຕົວຈິງ ແລະ ຜົນໄດ້ຮັບ) ໂດຍຜ່ານລະບົບ ຂອງ ຖານຂໍ້ມູນ ຊ.ກ.ພ ແຫ່ງຊາດ | ຍັງບໍ່ທັນມີລະບົບຖານຂໍ້ ມູນ ຊ.ກ.ພ ແຫ່ງຊາດ<br><br>ການປ້ອນຂໍ້ມູນເຂົ້າລະບົບ ລະບົບ ຖານຂໍ້ມູນຄຸ້ມຄອງ ໂຄງການຊ່ວຍເຫຼືອທາງ ການ ເພື່ອການພັດທະນາ (AMP) ຍັງບໍ່ເປັນໄປຕາມ ກໍານົດເວລາ | ປີ2018, ສ້າງລະບົບຖານຂໍ້ ມູນ ຊ.ກ.ພ ແຫ່ງຊາດ ໂດຍ ອີງຕາມ ການຖອດຖອນ ບົດຮຽນ ຈາກລະບົບ ຖານຂໍ້ ມູນ ຄຸ້ມຄອງ ໂຄງການ ຊ່ວຍເຫຼືອທາງການ ເພື່ອການ ພັດທະນາ (AMP)<br><br>ປີ2019, ພັດທະນາລະບົບ ເພື່ອຍົກສູງ ຄຸນນະພາບ ຂອງ ຖານຂໍ້ມູນກ່ຽວກັບ ການຮ່ວມ ມືການພັດທະນາ<br><br>ປີ2020 ເປັນຕົ້ນໄປ, ຈະມີ ການເຂົ້າເຖິງ ແຫຼ່ງຂໍ້ມູນ ຂ່າວສານ ກ່ຽວກັບການຮ່ວມ ມື ເພື່ອການພັດທະນາ ທີ່ມີຄຸນ ນະພາບສູງ | ບົດລາຍງານ ການຈັດຕັ້ງ ປະຕິບັດ ໂຄງການ ຊ່ວຍເຫຼືອ ທາງ ການ ເພື່ອການ ພັດທະນາ ໂດຍ ສັງເຂບ | ກະຊວງ ແຜນການ ແລະ ການລົງທຶນ ສົມ ທົບກະຊວງ ຂະແ ໜງການ, ລວມ ເຖິງ 10 ໜ່ວຍ ງານກອງເລຂາ, ອົງການ ສະຫະ ປະຊາຊາດ/ ອົງການສະຫະ ປະຊາຊາດ ເພື່ອ ການພັດທະນາ ແລະບັນດາຄູ່ ຮ່ວມພັດທະນາ ອື່ນໆ ທີ່ກ່ຽວຂ້ອງ |

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| **VI.** ການລະດົມແຫຼ່ງທຶນ ພາຍໃນປະເທດ | 12. ຍົກລະດັບທຶນຮ່ວມມືເພື່ອການພັດທະນາສໍາລັບການລົງທຶນໃສ່ບັນດາກິດຈະກໍາພັດທະນາຕ່າງໆໂດຍການຈັດສັນທຶນພາຍໃນທີ່ມາຈາກລາຍໄດ້ແຫ່ງລັດແມ່ນມີຄວາມສໍາຄັນ ແລະຄວນປະຕິບັດໃຫ້ຫຼາຍເທົ່າທີ່ເປັນປໄດ້ | ອັດຕາສ່ວນຂອງການປະກອບສ່ວນ ທຶນສົມທົບ ຂອງລັດຖະບານ ເຂົ້າໃນກິດຈະກໍາ ທີ່ໄດ້ຮັບທຶນຈາກການຮ່ວມມື ເພື່ອການພັດທະນາຄວນເຮັດໃຫ້ໄດ້ຫຼາຍເທົ່າທີ່ເປັນໄປໄດ້. | ໂດຍລວມແລ້ວແມ່ນການໃຫ້ທຶນທີ່ເປັນວັດຖຸ | ປີ 2025, ຕາມອັດຕາສ່ວນທຶນສົມທົບ ຂອງລັດຖະບານເຂົ້າໃນກິດຈະກໍາ ທີ່ໄດ້ຮັບທຶນຈາກການຮ່ວມມື ເພື່ອການພັດທະນາ ທັງໝົດ ທີ່ສະໜັບສະໜູນ ໂດຍ ການຮ່ວມມື ເພື່ອການການພັດທະນາໃຫ້ໄດ້ຫຼາຍເທົ່າທີ່ເປັນໄປໄດ້. | ບົດລາຍງານຂອງກະຊວງ ແຜນການ ແລະການລົງທຶນ ເຖິງສະພາແຫ່ງຊາດ | ກົມຮ່ວມມືສາກົນ ,ກະຊວງແຜນການ ແລະການລົງທຶນ, ໂດຍຜ່ານກອງປະຊຸມປຶກສາຫາລືກັບບັນດາກະຊວງຂະແໜງການ, ລວມເຖິງ ໜ່ວຍງານກອງເລຂາ ແລະ ຄູ່ຮ່ວມພັດທະນາ ທີ່ກ່ຽວຂ້ອງ. |
| **VII.** ການຮ່ວມມືໃຕ້-ໃຕ້, ການຮ່ວມມືສາມຫຼ່ຽມ ແລະ ການແລກປ່ຽນຄວາມຮູ້ | 13. ເພີ່ມທະວີຄວາມເຂົ້າໃຈກ່ຽວກັບລັກສະນະ ແລະຮູບແບບ ການຮ່ວມມືຂອງຄູ່ຮ່ວມງານໃຕ້-ໃຕ້, ແລະການມີສ່ວນຮ່ວມທີ່ສໍາຄັນ ໃນການຄຸ້ມຄອງການຮ່ວມມືການພັດທະນາ ໂດຍວາງ ກົນໄກ ການປະສານງານ ແລະການລາຍງານ ທີ່ຈະແຈ້ງ. | ວາງຂໍ້ກໍານົດ ການມີສ່ວນຮ່ວມຂອງຄູ່ຮ່ວມງານພາກໃຕ້-ໃຕ້ ໃນການວາງນະໂຍບາຍ ແຫ່ງຊາດ ແລະ ປຶກສາຫາລື ແຜນງານ, ລວມທັງກໍານົດ ການສະໜັບສະໜູນ ເຂດຂອງການສະໜັບສະໜູນສໍາລັບການປະຕິບັດ ໂດຍວາງ ກົນໄກ ການປະສານງານ ແລະການລາຍງານ ທີ່ຈະແຈ້ງ. | ລະດັບການມີສ່ວນຮ່ວມຂອງການຮ່ວມມືໃຕ້-ໃຕ້, ລວມທັງ ກຸ່ມປະຊາຄົມເສດຖະກິດ ອາຊຽນແລະຄູ່ຮ່ວມງານລະດັບອະນຸພາກພື້ນ ແມ່ນຢູ່ໃນລະດັບນ້ອຍ ແຕ່ມີການຂະຫຍາຍຕົວ | ຂໍ້ມູນຂອງການຮ່ວມມື ເພື່ອການພັດທະນາ ກັບຄູ່ຮ່ວມງານໃຕ້-ໃຕ້ ຕ້ອງມີກົນໄກ ການປະສານງານ ແລະການລາຍງານທີ່ຈະແຈ້ງ ແລະທ່ວງທັນຕາມເວລາທີ່ກໍານົດ. | ແຜນດໍາເນີນງານຖະແຫຼງການວຽງຈັນ ແລະບົດລາຍງານການສໍາຫຼວດ ຂອງການຮ່ວມມືເພື່ອການພັດທະນາສາກົນ | ກົມຮ່ວມມືສາກົນ ,ກະຊວງແຜນການ ແລະການລົງທຶນ ແລະກະຊວງ ອຸດສະຫາກໍາ ແລະການຄ້າ ປຶກສາຫາລືກັບບັນດາກະຊວງຂະແໜງການ, ລວມເຖິງ ໜ່ວຍງານກອງເລຂາ, ສະພາການຄ້າ |

| ຫຼັກການ | ໜ້າວຽກທີ່ຕ້ອງປະຕິບັດ | ຕົວຊີ້ວັດຕົ້ນຕໍ | ຂໍ້ມູນພື້ນຖານ & ຄາດໝາຍ | | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | 2015 ຂໍ້ມູນພື້ນຖານ | 2025 ຄາດໝາຍ | | |
| | | | | | | ແຫ່ງຊາດລາວ, ສະພາການຄ້າ ສາກົນ ແລະ ຄູ່ຮ່ວມພັດທະນາ ທີ່ກ່ຽວຂ້ອງ. |
| **VIII.** ການສົ່ງເສີມພາກທຸລະກິດ ໃຫ້ເປັນຄູ່ຮ່ວມໃນການພັດທະນາ | 14. ປັບປຸງແຜນການດຳເນີນງານ ຂອງພາກເອກະຊົນ ຢູ່ສູນກາງ ແລະທ້ອງຖິ່ນ ໃນການປະສານງານ ແລະ ການວາງແຜນການພັດທະນາ, ລວມທັງການຈັດຕັ້ງປະຕິບັດ, ການລາຍງານ ແລະຕິດຕາມກວດກາ ຂອງຜົນໄດ້ຮັບຂອງການພັດທະນາ ແລະ ຜົນໄດ້ຮັບ ໂດຍຜ່ານການວິເຄາະໂຄງຮ່າງ / ກົນໄກ ທີ່ເໝາະສົມ. | ວາງຂໍ້ກຳນົດ ໃນການປະສານສົມທົບ ຂອງພາກເອກະຊົນ ໃນປັບປຸງ ການວາງນະໂຍບາຍ ການພັດທະນາ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ, ໂດຍຜ່ານການວິເຄາະທີ່ເຫມາະສົມການວິເຄາະໂຄງຮ່າງ / ກົນໄກ ທີ່ເໝາະສົມ (ເຊື່ອມໂຍງລະຫວ່າງ ຂະບານການໂຕະມົນ ແລະຂະແໜງການຄ້າ ແລະພາກເອກະຊົນເຮັດວຽກຮ່ວມ ສະມາຄົມນັກທຸລະກິດລາວ) | ການມີສ່ວນຮ່ວມແລະການສົມທົບ ຂອງພາກເອກະຊົນ ແມ່ນຢູ່ໃນລະດັບປານກາງ ທີ່ເຊື່ອມໂຍງລະຫວ່າງ ຂະບວນການໂຕະມົນ ແລະຂະແໜງການຄ້າ ແລະພາກເອກະຊົນເຮັດວຽກຮ່ວມ ສະມາຄົມນັກທຸລະກິດລາວ) | ວາງກົນໄກ ລະບົບການປະສານງານ ກັບພາກເອກະຊົນໃນການມີສ່ວນຮ່ວມ ຢ່າງຊະນິດແໜ້ນ (ໂດຍ ເຊື່ອມໂຍງ ລະຫວ່າງ ຂະບານການໂຕະມົນ ແລະຂະແໜງການຄ້າ ແລະພາກເອກະຊົນ ເຮັດວຽກຮ່ວມ ສະມາຄົມນັກທຸລະກິດລາວ ຢ່າງຊະນິດແໜ້ນ) | ແຜນດຳເນີນງານ ຖະແຫຼງການ ວຽງຈັນ ແລະ ບົດລາຍງານການສຳຫຼວດ ຂອງການຮ່ວມມືເພື່ອການພັດທະນາສາກົນ ສຳລັບການເປັນຄູ່ຮ່ວມ ການຮ່ວມມື ເພື່ອການພັດທະນາ ທີ່ມີປະສິດທິຜົນ | ກະຊວງ ອຸດສະຫາກຳ ແລະການຄ້າ ແລະ ກະຊວງແຜນການ ແລະ ການລົງທຶນ ປຶກສາຫາລື ກັບ ບັນດາກະຊວງ ຂະແໜງການ, ລວມເຖິງ ໜ່ວຍງານກອງເລຂາ, ແລະ ຄູ່ຮ່ວມພັດທະນາ ທີ່ກ່ຽວຂ້ອງ. |